**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ ອຸດົມໄຊ
ພະແນກ ເຕັກໂນໂລຊີ ແລະ ການສື່ສານ

ເລກທີ 162 /ພຕສ
ອຸດົມໄຊ, ວັນທີ 17 ມີນາ 2025

# ແຈ້ງການ

**ເຖິງ:** ບັນດາການຈັດຕັ້ງ, ບຸກຄົນ, ນິຕິບຸກຄົນ ແລະ ນັກຮຽນນັກສຶກສາ ພາຍໃນແຂວງອຸດົມໄຊ.

**ເລື່ອງ:** ຂໍເຊີນຊວນ ສິ່ງຜະລິດຕະພັນນະວັດຕະກຳ ໄອຊີທີ ເຂົ້າຮ່ວມການແຂ່ງຂັນ Lao Innovation Digital Award 2025.

- ອີງຕາມ ຂໍ້ຕົກລົງ ຂອງທ່ານເຈົ້າແຂວງອຸດົມໄຊ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງພະແນກ ເຕັກໂນໂລຊີ ແລະ ການສື່ສານແຂວງອຸດົມໄຊ, ສະບັບເລກທີ 776/ອຊ, ລົງວັນທີ 15 ສິງຫາ 2022;
- ອີງຕາມ ແຈ້ງການ ຂອງອະນຸກຳມະການຮັບຜິດຊອບຈັດການແຂ່ງຂັນ ກ່ຽວກັບການສົ່ງຜະລິດຕະພັນນະວັດຕະກຳ ໄອຊີທີ ເຂົ້າຮ່ວມການແຂ່ງຂັນ Lao Innovation Digital Award 2025 ສະບັບເລກທີ 011/ກຕສ.ອຂຂ, ລົງວັນທີ 13 ກຸມພາ 2025;

ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງອຸດົມໄຊ ຂໍຖືເປັນກຽດແຈ້ງ ແລະ ເຊີນຊວນມາຍັງບັນດາການຈັດຕັ້ງ, ບຸກຄົນ, ນິຕິບຸກຄົນ ແລະ ນັກຮຽນນັກສຶກສາ ໃນຂອບເຂດທົ່ວແຂວງອຸດົມໄຊ ທີ່ມີຜະລິດຕະພັນ ໄອຊີທີ ດີຈີຕອນ, ນະວັດຕະກຳດ້ານເຕັກໂນໂລຊີ ສົ່ງຜົນງານຂອງຕົນ ເພື່ອເຂົ້າຮ່ວມແຂ່ງຂັນໃນງານ Lao Innovation Award ປະຈຳປີ 2025 ຊຶ່ງລາຍລະອຽດເງື່ອນໄຂ ແລະ ວິທີການສະໝັກ ມີດັ່ງນີ້:

1. ເງື່ອນໄຂຜູ້ເຂົ້າຮ່ວມແຂ່ງຂັນ: ຕ້ອງເປັນບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ, ນັກຄົ້ນຄວ້າ ແລະ ນັກຮຽນນັກສຶກສາ ພາຍໃນ ສປປ ລາວ;
2. ປິດຮັບສະໝັກ: ວັນທີ 25 ມີນາ 2025;
3. ເບິ່ງລາຍລະອຽດເງື່ອນໄຂ ແລະ ວິທີການສະໝັກ ໄດ້ທີ່ **ເວັບໄຊ**: www.laoictaward.gov.la ຫຼື ພົວພັນສອບຖາມຂໍ້ມູນເພີ່ມເຕີມ: **WhatsApp:** 020 5639 5659, 020 2983 1565, **Facebook:** Lao Innovation Digital Award Official, **E-Mail:** laoictaward@gmail.com

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດ ຕາມທີ່ຄວນດ້ວຍ.

**ຫົວໜ້າພະແນກ**

ກະຊວງເຕັກໂນໂລຊີ ແລະ ການສື່ສານ
ພະແນກ
ເຕັກໂນໂລຊີ ແລະ
ການສື່ສານ
ແຂວງອຸດົມໄຊ

ນ. ປິ່ນຄຳ ອຸ່ນລະຄອນ

ພົວພັນປະສານງານ

ທ. ແກ່ນຈັນ ຫຼີບຸນທຳ 020 2872 4983